# ສຳເລັດການສ້າງອາສາສະໝັກບ້ານ ແລະ ກຸ່ມແມ່ຍິງບ້ານ ຂອງໂຄງການ ສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມຊົນເຜົ່າກາໂດ ເພື່ອປັບປຸງ ແລະ ຕອບໂຕ້ ວຽກງານສະກັດກັ້ນ ການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ປັບປຸງດ້ານ ສຸຂະພາບ ແລະ ໂພສະນາການ ທີ່ເມືອງສະມ້ວຍ ແຂວງສາລະວັນ




| ID: | Author: | Organization: | Created date: |
|---|---|---|---|
| 91 | TKL | Takieng Lao | 2020-08-31 00:00:00 |

## 1. ກ່ຽວກັບສະພາບບັນຫາທີ່ໂຄງການຢາກຈະແກ້ໄຂ / About the problem that project want to solve.

ການສ້າງອາສາສະໝັກເປັນອີກວຽກງານໜຶ່ງທີ່ນອນຢູ່ໃນຈຸດປະສົງຂອງໂຄງການ ໃນການສ້າງຄວາມເຂັ້ມແຂງ ແລະ ຄວາມອາດສາມາດ ໃຫ້ປະຊາຊົນ ໂດຍໃຫ້ຄົນໃນພື້ນທີ່ເປົ້າໝາຍເອງ ມີສ່ວນຮ່ວມໃນການຂັບເຂື່ອນກິດຈະກຳຂອງໂຄງການ ແລະ ຄອຍປະສານງານກັບທາງທີມງານໄດ້ຢ່າງເປັນໄລຍະ, ດັ່ງນັ້ນ ທາງພວກເຮົາຈຶ່ງໄດ້ມີການຈັດຕັ້ງການຄັດເລືອກອາສາສະໝັກຂຶ້ນຢູ່ໃນ 5 ບ້ານເປົ້າໝາຍ ນັ້ນກໍຄື ບ້ານກິລິ, ບ້ານສະໝ້ວຍ, ບ້ານກິແນະ, ບ້ານຕະໂລ້ຍ ແລະ ບ້ານອາໂມນລຶກ ເມືອງສະໝ້ວຍ ແຂວງສາລະວັນ

## 2. ໂຄງການໄດ້ເຮັດຫຍັງແດ່ເພື່ອແກ້ໄຂບັນຫາ / About how the project solve the problems

- ໂຄງການໄດ້ມີການຮ່ວມມືກັບບັນດາຄູ່ຮ່ວມງານພາກລັດ ນັ້ນກໍຄື ສຶກສາເມືອງ ແລະ ແມ່ຍິງເມືອງ ໃນການອຳນວຍຄວາມສະດວກເພື່ອລົງບ້ານໄປຄັດເລືອກອາສາສະໝັກ
- ໂຄງການໄດ້ປະສານງານໄປຍັງອຳນາດການປົກຄອງແຕ່ລະບ້ານໃນການເຕົ້າໂຮມພົນ ແລະ ຊອກຫາຜູ້ທີ່ມີຄວາມສົນໃຈຢາກເປັນອາສາສະໝັກ
- ໂຄງການໄດ້ອະທິບາຍເຖິງຈຸດປະສົງ, ເປົ້າໝາຍ, ພາລະໜ້າທີ່ ໃນການຄັດເລືອກ ອາສາສະໝັກໃຫ້ແກ່ຜູ້ເຂົ້າຮ່ວມຮັບຮູ້

## 3. ຜົນສຳເລັດຂອງໂຄງການ / Results of the project

ສາມາດສ້າງອາສາສະໝັກບ້ານ ແລະ ກຸ່ມແມ່ຍິງບ້ານໄດ້ທັງໝົດ 20 ຄົນ ຍິງ 10 ຄົນ,ບ້ານລະ 4 ຄົນ ຍິງ 2ຄົນ

## 4. ປັດໄຈສູ່ຜົນສຳເລັດ / Factors of success

ແມ່ນໄດ້ຮັບການຮ່ວມມືເປັນຢ່າງດີຈາກທາງຄູ່ຮ່ວມງານ, ອຳນາດການປົກຄອງບ້ານ ທີ່ຄອຍປະສານງານ ແລະ ອຳນວຍຄວາມສະດວກແກ່ທີມງານຢ່າງເປັນປະຈຳ

ຜູ້ເຂົ້າຮ່ວມມີຄວາມປະສົງທີ່ຈະຢາກເປັນອາສາສະໝັກຈາກໃຈຈິງ ໂດຍການຢາກເຫັນການປ່ຽນແປງຂອງບ້ານເປັນໄປໃນທາງທີ່ດີຂຶ້ນພ້ອມທັງຢາກມີການພັດທະນາສັກກະຍະພາບຂອງໂຕເອງອີກດ້ວຍ

## 5. ຂໍ້ຈຳກັດທີ່ເຮັດໃຫ້ບໍ່ສຳເລັດຜົນໄດ້ດີ / Limitations

ບັນຫາທີ່ພົບເຫັນຍັງເປັນບັນຫາພຽງເລັກນ້ອຍ ເປັນຕົ້ນກໍແມ່ນການສື່ສານທາງດ້ານພາສາສທີ່ຍັງຄົງຕ້ອງຄ່ອຍປັບປຸງກັນໄປ, ນອກຈາກນັ້ນ ສິ່ງທີ່ເປັນບັນຫາ ແລະ ສິ່ງທ້າທາຍສຳລັບພວກເຮົາກໍແມ່ນ ຕະກຽງລາວເອງກໍຍັງບໍ່ທັນໄດ້ຮັບທະບຽນເປີດເປັນສະມາຄົມຢ່າງເປັນທາງການເທື່ອ ດັ່ງນັ້ນ ໃນການປະຕິບັດກິດຈະກຳແຕ່ລະຢ່າງ ຈຶ່ງຈຳເປັນຕ້ອງໄດ້ອີງໃສ່ເອກະສານ ນິຕິກຳຂອງທາງສະມາຄົມສຸຂະພາບຊຸມຊົນ ແລະ ການມີສ່ວນຮ່ວມ ເຂົ້າໃນການປະສານງານຕ່າງໆ ດັ່ງນັ້ນ ຈຶ່ງເປັນການຫຍຸ້ງຍາກໃນການປະສານງານກັບທາງບ້ານເປົ້າໝາຍເປັນບາງຄັ້ງ

## 6. ຂໍ້ແນະນຳສຳລັບຜູ້ທີ່ສົນໃຈຢາກທົດລອງນຳໃຊ້ / Recommendations for scaling up

- ຄວນມີການປະສານງານກັບທາງບ້ານເປົ້າໝາຍຢ່າງລະອຽດ
- ຄວນມີເອກະສານ ຫຼື ໜັງສືທີ່ເປັນທາງການຂອງໂຄງການ ຫຼື ຫ້ອງການເອງ ເພື່ອສະດວກໃນການປະສານງານໃນແຕ່ລະຄັ້ງ
- ຄວນມີຄຳຖາມ ຫຼື ມີເກນການຄັດເລືອກຢ່າງເໝາະສົມ ໂດຍອີງຕາມເປົ້າໝາຍຂອງໂຄງການນັ້ນໆ








